ບົດລາຍງານ

ການດຳເນີນທຸລະກິດ ປະຈຳປີ 2019

ສິ້ນສຸດວັນທີ 31 ທັນວາ 2019

ວິໄສທັດ/ Vision

ເປັນບໍລິສັດຊັ້ນນຳ ທາງດ້ານພະລັງງານເຊື້ອໄຟ ທີ່ຄົບວົງຈອນດ້ານຜະລິດຕະພັນປິໂຕຣລ້ຽມ ໃນສປປ ລາວ ແລະ ເຊື່ອມໂຍງການຄ້າໃນລະດັບອາຊຽນ ພາຍໃນ 5 ປີ.

Be a leader of Petroleum business in Lao PDR andlink the commcercial with ASEAN within 5 years.

ພາລະກິດ / Mission

ສ້າງທຸລະກິດພະລັງງານເຊື້ອໄຟຂອງເອກະຊົນລາວທີ່ຄົບວົງຈອນເປັນທີ່ຍອມຮັບແລະເຊື່ອໝັ້ນຂອງສັງຄົມ ສາມາດເຊື່ອມໂຍງການຄ້າໃນລະດັບພູມມິພາກ, ສ້າງ ແລະ ແບ່ງປັນຜົນປະໂຫຍດຕໍ່ຜູ້ທີ່ມີສ່ວນກ່ຽວພັນ ແລະ ສັງຄົມ.

Create Lao private sector's petroleum business fully integration with accpepted and confidence for the end users, linked commercial in the region, create and sharing profitibilities of those involved and to the societies.





ປະຫວັດຄວາມເປັນມາຂອງ ປິໂຕຣເທຣດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ(Petroleum Trading Lao PublicCompany)ຫຼື ທີ່ຮູ້ຈັກກັນໃນນາມ ປິໂຕຣເທຣດ ສ້າງຕັ້ງຂຶ້ນໂດຍ ທ່ານ ຈັນທອນ ສິດທິໄຊ ແລະ ພັນລະຍາຄືທ່ານ ນາງ ສະຫວັນທອງ ພົງສະຫວັນ ເຊິ່ງທັງສອງທ່ານລ້ວນແຕ່ເປັນນັກທຸລະກິດທີ່ມີຊື່ສຽງໃນ ສປປ ລາວແລະ ມີປະສົບການໃນການປະກອບທຸລະກິດທີ່ຫຼາກຫຼາຍເປັນຕົ້ນແມ່ນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າຫຼາຍປະເພດໃນ ສປປ ລາວ.

ທີ່ຜ່ານມາ ທັງສອງທ່ານໄດ້ມີໂອກາດເດີນທາງເພື່ອສຳຫຼວດພື້ນທີ່ໃນຕົວເມືອງຕ່າງໆທັງໃນເຂດຊຸມຊົນ ແລະ ເຂດຊົນນະບົດຫ່າງໄກສອກຫຼີກເກືອບທຸກພື້ນທີ່ໃນ ສປປ ລາວ ເຊິ່ງທ່ານໄດ້ເບິ່ງເຫັນຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງພະລັງງານ ຫຼື ນ້ຳມັນໂດຍສະເພາະໃນເຂດພື້ນທີ່ຫ່າງໄກສອກຫຼີກ ແລະ ເຫັນວ່ານ້ຳມັນທີ່ຂາຍໃນເຂດດັ່ງກ່າວແມ່ນມີລາຄາແພງເກີນກວ່າລາຄາປົກກະຕິທີ່ລັດຖະບານກຳນົດ. ດ້ວຍເຫັນໄດ້ເຖິງຄວາມຕ້ອງການໃນການຊົມໃຊ້ນ້ຳມັນ ປະກອບກັບແນວໂນ້ມການພັດທະນາເສດຖະກິດຈາກພາກລັດຖະບານ ໂດຍຖືເອົານ້ຳມັນເຊື້ອເພີງເປັນຊັບພະຍາກອນພື້ນຖານທີ່ສຳຄັນໃນການປະກອບສ່ວນໃນການພັດທະນາເສດຖະກິດຂອງປະເທດ. ສະນັ້ນ, ທ່ານ ຈັນທອນ ຈຶ່ງມີແນວຄວາມຄິດໃນການທີ່ຈະສ້າງສະຖານີບໍລິການນ້ຳມັນທີ່ມີຄຸນນະພາບ ແລະ ລາຄາຍຸຕິທຳໃຫ້ແກ່ປະຊາຊົນໃນຂົງເຂດຫ່າງໄກ ແລະ ກະຈາຍທົ່ວ ສປປ ລາວ, ດ້ວຍເຫດຜົນທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເປັນຈຸດເລີ່ມຕົ້ນຂອງການສ້າງຕັ້ງບໍລິສັດຂຶ້ນໃນວັນທີ 6 ກຸມພາ 2008 ດ້ວຍທຶນຈົດທະບຽນເບື້ອງຕົ້ນ 28.80 ຕື້ກີບ ເພື່ອໃຫ້ບໍລິການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນຜ່ານທາງສະຖານີບໍລິການນ້ຳມັນ, ໂຄງການກໍ່ສ້າງຕ່າງໆລວມໄປເຖິງໂຄງການກໍ່ສ້າງພື້ນຖານໂຄງລ່າງ ໂດຍມີສຳນັກງານໃຫຍ່ຕັ້ງຢູ່ບ້ານ ສຸນັນທາ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.


ບໍລິສັດໄດ້ນຳເຂົ້ານ້ຳມັນເຊື້ອໄຟຈາກໂຮງກັ່ນນ້ຳມັນທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບໃນດ້ານຄຸນນະພາບໃນລະດັບສາກົນ ໂດຍນຳເຂົ້ານ້ຳມັນຈາກຜູ້ຜະລິດໃນປະເທດໄທ ເຊິ່ງປະກອບດ້ວຍ Chevron (Thailand) Limited

(Chevron), ESSO (Thailand) Public Company Limited (ESSO), IRPC Public Company Limited(IRPC) ແລະ The Shell Company of Thailand Limited (Shell).

ປີ		ສະຫຼຸບຫຍໍ້ເຫດການທີ່ພົ້ນເດັ່ນ
ປີ 2008	:	➢ ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ຈຳກັດ ສ້າງຕັ້ງຂຶ້ນດ້ວຍທຶນຈົດທະບຽນ 28.80 ຕື້ກີບ ໂດຍທ່ານ ຈັນທອນ ສິດທິໄຊ ແລະ ທ່ານ ນາງ ສະຫວັນທອງ ຝົງສະຫວັນ ຖືຮຸ້ນໃນສັດສ່ວນ 75 ສ່ວນຮ້ອຍ ແລະ 25 ສ່ວນຮ້ອຍຕາມລຳດັບ ໂດຍມີວັດຖຸປະສົງຫຼັກຄືການນຳເຂົ້າ ແລະ ຈັດຈຳໜ່າຍນ້ຳມັນເຊື້ອໄຟຜ່ານສະຖານີບໍລິການນ້ຳມັນໃນ ສປປ ລາວ.
ປີ 2009	:	➢ ສ້າງສະຖານີບໍລິການນ້ຳມັນທີ່ໄດ້ມາດຕະຖານແຫ່ງທຳອິດຂຶ້ນທີ່ ໂພນທັນຊື່ວ່າ ປ໊ຳນ້ຳມັນ ພລັສ 1 (Plus 1). ➢ ເປີດນຳໃຊ້ສາງນ້ຳມັນແຫ່ງທຳອິດ ທີ່ແຂວງສະຫວັນນະເຂດ ບໍລິມາດບັນຈຸ700,000 ລິດ.
ປີ 2010	:	➢ ໄດ້ຮັບການຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນ 3 ດ້ານຄື: ISO 9001:2008 Quality Management System, ISO 14001:2004Environmental Management System, OHSAS 18001:2007Occupational Health and Safety Management Systems. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ວຽງຈັນ ບໍລິມາດບັນຈຸ 1,120,000 ລິດ ແລະ ສາງນ້ຳມັນ ເມືອງເງິນ , ແຂວງ ໄຊຍະບູລີ ບໍລິມາດບັນຈຸ 700,000 ລິດ.
ປີ 2011	:	➢ ບໍລິສັດໄດ້ມີການເພີ່ມທຶນຈົດທະບຽນເປັນ 75.60 ຕື້ກີບ ເພື່ອຮອງຮັບການເຕີບໂຕ ແລະ ການລົງທຶນໃນການຂະຫຍາຍສະຖານີບໍລິການນ້ຳມັນໃຫ້ຄອບຄຸມທຸກພື້ນທີ່ຂອງ ສປປ ລາວ. ➢ ມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ໂກລ(GLD) ເປັນແຫ່ງທຳອິດຂຶ້ນທີ່ ນະຄອນຫຼວງວຽງຈັນ. ➢ ໄດ້ມີການເປີດໃຊ້ສາງນ້ຳມັນທີ່ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ ບໍລິມາດບັນຈຸ 350,000 ລິດ. ➢ ມີສ່ວນແບ່ງທາງການຕະຫຼາດເປັນອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນ ສປປ ລາວ.
ປີ 2012	:	➢ ບໍລິສັດມີການເປີດສະຖານີບໍລິການນ້ຳມັນໃນຮູບແບບ ພລັສ ແພ໊ລດຕິນຳ (PTN) ເປັນສະຖານີບໍລິການນ້ຳມັນທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ ແລະ ໃສ່ຊື່ວ່າ ພລັສ ສະຖານີບໍລິການນ້ຳມັນ ດອນກອຍທີ່ບ້ານ ດອນກອຍ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ➢ ສາມາດຮັກສາສ່ວນແບ່ງທາງການຕະຫຼາດອັນດັບ 2 ທາງດ້ານທຸລະກິດເຊື້ອໄຟໃນສປປ ລາວ. ➢ ນຳໃຊ້ເຕັກໂນໂລຊີ ແລະ ລະບົບໄອທີທີ່ທັນສະໄໝເຂົ້າໃນການພັດທະນາ, ຄຸ້ມຄອງບໍລິຫານວຽກງານຂາຍຜ່ານເຄື່ອງຮູດບັດ (Electronic Data Capture: EDC)ແລະ ການເກັບກຳຂໍ້ມູນຈາກສູນກາງໄປຫາບັນດາສາຂາໃນຂອບເຂດທົ່ວປະເທດດ້ວຍການສ້າງຊອບແວລະບົບບໍລິຫານຂໍ້ມູນແບບລວມສູນ ຫຼື ERP System. ➢ ມີການລົງທຶນສ້າງລະບົບການບໍລິຫານການຂາຍນ້ຳມັນຜ່ານບັດອີເລັກໂທຣນິກ ຫຼື ບັດເຕີມນ້ຳມັນແທນເງິນສົດ (Fleet Card) ເປັນຜູ້ທຳອິດໃນ ສປປ ລາວ ເຊິ່ງເປັນຜູ້ລິເລີ່ມນຳເອົາເຕັກໂນໂລຊີໃນ

		ການບໍລິຫານ ແລະ ຄວບຄຸມຕົ້ນທຶນຄ່າໃຊ້ຈ່າຍໃນການບໍລິຫານຂອງຫ້ອໜ່ວຍທຸລະກິດ ລວມເຖິງ ຍັງເປັນບັດທີ່ສາມາດໃຊ້ແທນເງິນສົດໃນການຊຳລະຄ່ານ້ຳມັນໃຫ້ຜູ້ມາໃຊ້ບໍລິການໃນສະຖານີ ບໍລິການນ້ຳມັນຂອງບໍລິສັດ.
ປີ 2013	:	➢ ບໍລິສັດເພີ່ມທຶນຈົດທະບຽນເປັນ 350.00 ຕື້ກີບ ເພື່ອຮອງຮັບການເຕີບໂຕຂອງບໍລິສັດ ແລະ ການຂະຫຍາຍການລົງທຶນເພື່ອເປັນຜູ້ໃຫ້ບໍລິການໃນອັນດັບຕົ້ນຂອງ ສປປ ລາວ ແລະ ເພື່ອຮອງຮັບການເຕີບໂຕຂອງຄວາມຕ້ອງການນ້ຳມັນໃນ ສປປ ລາວ ແລະ ການເປີດປະຊາຄົມເສດຖະກິດອາຊຽນ (ASEAN Economic Community: AEC). ➢ ໄດ້ຮັບການສືບຕໍ່ຮັບຮອງຄຸນະພາບມາດຕະຖານຈາກໜ່ວຍງານUKASໃນທັງ 3 ດ້ານຄື: ISO 9001:2008, ISO 14001:2004, OHSAS 18001:2007. ➢ ໄດ້ມີການປັບປຸງໂຄງສ້າງບໍລິສັດ ແລະ ບໍລິສັດທີ່ກ່ຽວພັນໃຫ້ຊັດເຈນ ເພື່ອຮອງຮັບການເຕີບໂຕໃນໄລຍະຍາວ. ➢ ຍັງຄົງຮັກສາສ່ວນແບ່ງການຕະຫຼາດເປັນອັນດັບ 2 ຂອງຜູ້ຈຳໜ່າຍນ້ຳມັນເຊື້ອໄຟໃນ ສປປ ລາວ.
ປີ 2014	:	➢ ບໍລິສັດໄດ້ເຂົ້າເປັນສະມາຊິກ ສະມາຄົມ ນ້ຳມັນເຊື້ອໄຟ ແລະ ອາຍແກັດລາວທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳລາວ. ➢ ອີງຕາມກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2014 ໃນວັນທີ 18 ມິຖຸນາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້: – ຫຼຸດມູນຄ່າທີ່ກຳນົດໄວ້ຕໍ່ຮຸ້ນຈາກເດີມ 350,000,000 ກີບ ເປັນ 2,000 ກີບຕໍ່ຮຸ້ນ ສິ່ງຜົນໃຫ້ຈຳນວນຮຸ້ນຂອງບໍລິສັດເພີ່ມຂຶ້ນຈາກ 1,000 ຮຸ້ນ ເປັນ 175,000,000 ຮຸ້ນ. – ໄດ້ມີການກະຈາຍຮຸ້ນຈາກຜູ້ຖືຮຸ້ນເດີມ 2 ຄົນ ມາເປັນ 9 ຄົນ ເພື່ອຮອງຮັບການສ້າງຕັ້ງ ແລະ ປ່ຽນສະຖານະພາບເປັນບໍລິສັດມະຫາຊົນ. ➢ ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2014 ໃນວັນທີ 9 ຕຸລາ 2014 ມີມະຕິຕົກລົງທີ່ສຳຄັນ ດັ່ງນີ້: – ອະນຸມັດການເພີ່ມທຶນຈົດທະບຽນເປັນ 470.00ຕື້ກີບ ໂດຍການອອກຮຸ້ນສາມັນເພີ່ມທຶນຈຳນວນ 60,000,000 ຮຸ້ນ ມູນຄ່າກຳນົດ 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການສະເໜີຂາຍຮຸ້ນແກ່ມວນຊົນເປັນຄັ້ງທຳອິດ (IPO). – ສ້າງຕັ້ງບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການ ໃນວັນທີ 9 ທັນວາ 2014.




PetroTrade
ໂຄງຮ່າງການຈັດຕັ້ງ ປທລ
ຜູ້ຖືຮຸ້ນ
ສະພາບໍລິຫານ
ຄະນະກຳມະການ ບໍລິຫານ
ຄະນະກຳມະການ ບໍລິຫານຄວາມສ່ຽງ
ຄະນະກຳມະການ ເສດຖະກິດ
ຄະນະກຳມະການ ກວດສອບພາຍໃນ
ຜູ້ອຳນວຍການໃຫຍ່
ເລຂານຸການບໍລິສັດ
ບໍລິສັດ ປີໂຕຣເທຣດ ພູມາ ອິເນີຈີ ນຳເຂົ້າ-ສົ່ງອອກ ຈຳກັດ
ບໍລິສັດ ປີໂຕຣເທຣດ ພູມາ ອິເນີຈີ ດິສທິບິວຊັ່ນ ຈຳກັດ


PetroTrade
ພລັສ




ສະພາຜູ້ອຳນວຍການຂອງ ປທລ



ທ່ານ ຈັນທອນ ສິດທິໄຊ
ປະທານສະພາບໍລິຫານ



ທ່ານ ນາງ ສະຫວັນທອງ ພົງສະຫວັນ
ຮອງປະທານສະພາບໍລິຫານ



ທ່ານ ນາງ ຈັນທະດອນ ເມກສະຫວັນ
ຮອງປະທານສະພາບໍລິຫານ



ທ່ານ ໝຸ່ຜັນ ມະຫາພົນ
ສະມາຊິກສະພາບໍລິຫານອິດສະຫຼະ



ທ່ານ ໂພໄຊ ຈັນທະວົງສາ
ສະມາຊິກສະພາບໍລິຫານອິດສະຫຼະ



ທ່ານ ບຸນຖຸ້ມ ຈິດຕະວົງ
ຜູ້ອຳນວຍການ



ທ່ານ ນາງ ດາລີ ພົນເສນາ
ສະມາຊິກສະພາບໍລິຫານອິດສະຫຼະ

ສະພາບການດຳເນີນທຸລະກິດໂດຍລວມ

ໃນປີ 2019, ປທລ ໄດ້ເລີ່ມກິດແຕກຂະແໜງທຸລະກິດອອກຫຼາກຫຼາຍຂຶ້ນຈາກທີ່ໃນໄລຍະທີ່ຜ່ານມາແມ່ນ ອີງໃສ່ແຕ່ການຄ້ານ້ຳມັນເຊື້ອໄຟໂດຍສະເພາະ ຕໍ່ຈາກນີ້ຈະມີຫຼາກຫຼາຍທຸລະກິດແຕກຕ່າງອອກໄປ. ພາຍໃນປີ 2019 ປທລ ໄດ້ເລີ່ມເຮັດໃຫ້ເປັນຮູບປະທຳຂຶ້ນໂດຍເລີ່ມຈາກການເຊັນສັນຍາ ແລະ ການລົງນາມພິທີບົດບັນທຶກຄວາມເຂົ້າໃຈ ຫຼາຍໆໂຄງການໃຫ່ຍໆ ແລະ ເຂົ້າຮ່ວມງານທາງດ້ານທຸລະກິດຕ່າງໆ ທີ່ຕ່ຍອດທາງທຸລະກິດດັ່ງລຸ່ມນີ້:

ໃນກອງປະຊຸມປະຈຳປີ 2018 ແລະ ສະເຫຼີມສະຫຼອງ 30 ປີ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ທີ່ໄດ້ຈັດຂຶ້ນໃນວັນທີ 23 ມັງກອນ 2019 ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ເຊິ່ງພະນະທ່ານ ນາຍົກລັດຖະມົນຕີ ທ່ານ ທອງລຸນ ສີສຸລິດ ເປັນປະທານໃນກອງປະຊຸມຄັ້ງນີ້ ໂດຍ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຮັບໂລ່ກຽດຕິຍົດ ໃນຖານະບໍລິສັດທີ່ພົ້ນເດັ່ນໃນການປະກອບສ່ວນໃນການສ້າງສາ ແລະ ພັດທະນາ ພື້ນຖານໂຄງລ່າງຂອງສັງຄົມດ້ວຍດີຕະຫຼອດມາ.





ພິທີລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຶບຕໍ່ສຶກສາສຳຫຼວດຄວາມເປັນໄປໄດ້ໃນການລົງທຶນ ພັດທະນາໂຄງການທ່າບົກ ທ່ານາແລ້ງ ແລະ ເຂດໂລຈິສຕິກ ນະຄອນຫຼວງວຽງຈັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ບໍລິສັດ ສິດທິ ໂລຈິດສຕິກ ຈຳກັດ ເຊິ່ງໄດ້ຈັດຂຶ້ນໃນວັນທີ 5 ເມສາ 2019 ທີ່ໂຮງແຮມ ແລນມາກ ທັງນີ້ ບໍລິສັດ ສິດທິໂລຈິສຕິກ ລາວ ຈຳກັດ ເປັນບໍລິສັດໃນເຄືອຂອງບໍລິສັດປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຮັບ ຄວາມໄວ້ວາງໃຈຈາກລັດຖະບານລາວໃຫ້ເປັນຜູ້ພັດທະນາໂຄງການ ທ່າບົກທ່ານາແລ້ງ ແລະ ເຂດໂລຈິສຕິກ ນະຄອນ ຫຼວງວຽງຈັນ.






ຂະຫຍາຍຜົນຂອງການພົບປະກັນຂອງ ພະນະທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ພະນະທ່ານ ໂຈໂກ ວີໂດໂດ (Joko Widodo) ປະທານນາທິບໍດີ ແຫ່ງ ສ. ອິນໂດເນເຊຍ ໃນເດືອນ ຕຸລາ 2017 ທີ່ທັງສອງຝ່າຍ ລາວ-ອິນໂດເນເຊຍ ໄດ້ມີການເຫັນດີເສີມຂະຫຍາຍສາຍພົວພັນມິດຕະພາບທາງເສດຖະກິດ ແລະ ການຄ້າ ໃຫ້ນັບມື້ນັບແໜ້ນແຟ້ນຂຶ້ນ. ໃນການຮ່ວມມືຄັ້ງນີ້, ໄດ້ມີການລົງນາມບົດບັນທຶກຄວາມເຂົ້າໃຈ 3 ໂຄງການຄື:

1. ໂຄງການ ຮ່ວມມືພັດທະນາໂຄງການພື້ນຖານໂຄງລ່າງ ແລະ ຄົມມະນາຄົມ ລະຫວ່າງ ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງ ລາວ ມະຫາຊົນ ແລະ ລັດວິສາຫະກິດ Indonesia Railway Development Consortium ເຊິ່ງຄາດວ່າໃນເບື້ອງຕົ້ນ ຈະໄດ້ຮ່ວມທຶນພັດທະນາ ໂຄງການທາງລົດໄຟຈາກ ຕົວເມືອງ ທ່າແຂກ, ແຂວງ ຄຳມ່ວນ, ສປປ ລາວ ໄປຫາ ທ່າເຮືອ ຫວຸ້ງອ່າງ, ສສ ຫວຽດນາມ.
2. ບົດບັນທຶກຄວາມເຂົ້າໃຈ ເພື່ອຮ່ວມມືພັດທະນາໂຄງການອຸດສາຫະກຳບໍ່ແຮ່ ລະຫວ່າງ ບໍລິສັດ ປິໂຕຣ ລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ລັດວິສາຫະກິດ PT Timah TBK ແລະ ລັດວິສາຫະກິດ Pupuk Indonesia ເພື່ອຮ່ວມກັນສຳຫຼວດ ແລະ ຂຸດຄົ້ນ ບໍ່ເກືອກາລີ ແລະ ບໍ່ກົ່ວ.
3. ບົດບັນທຶກຄວາມເຂົ້າໃຈ ການຊື້-ຂາຍ ຖ່ານຫີນ ລະຫວ່າງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ລັດວິສາຫະກິດ Bukit Asam ເພື່ອສະໜອງໃຫ້ ໂຮງງານໄຟຟ້າພະລັງງາຄວາມຮ້ອນຖ່ານຫີນ 2.000MW ທີ່ ແຂວງ ຄຳມ່ວນ ສປປ ລາວ.









ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ສຳເລັດໃນການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບລັດຖະບານ ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ເພື່ອມອບສິດໃຫ້ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ເປັນຜູ້ສຶກສາ-ສຳຫຼວດ ແລະ ອອກແບບລະອຽດ ເພື່ອພັດທະນາໂຄງການທາງລົດໄຟ ລາວ-ຫວຽດນາມ. ພິທີດັ່ງກ່າວໄດ້ຈັດຂຶ້ນວັນທີ 15 ຕຸລາ 2019 ທີ່ໂຮງແຮມແລນມາກແມ່ຂອງຣີເວີໄຊ້. ໂຄງການພັດທະນາເສັ້ນທາງລົດໄຟ ລາວ-ຫວຽດນາມ ເຊິ່ງແມ່ນຈາກເມືອງທ່າແຂກ ແຂວງຄຳມ່ວນ ຫາ ທ່າເຮືອ ຫວຸ້ງອ່າງ ແຂວງຮ່າຕິ ສສ ຫວຽດນາມ ເພື່ອເຮັດໃຫ້ການເຊື່ອມໂຍງ ສປປ ລາວ ກັບພູມິພາກໍ່ຄືສາກົນມີຄວາມສະດວກຍິ່ງຂຶ້ນ ເພື່ອຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມໃຫ້ປະກົດຜົນເປັນຈິງໂດຍຕາມແຜນການແມ່ນ ການສຳຫຼວດຈະໃຫ້ສຳເລັດພາຍໃນ 8 ຫາ 12 ເດືອນ ແລະ ຄາດວ່າຈະສາມາດລົງມືກໍ່ສ້າງໃນທ້າຍປີ 2021 ໃນໄລຍະທາງຕາມໂຄງການປະມານ 240 ຫາ 270 ກິໂລແມັດ ເຊິ່ງເບື້ອງຕົ້ນຈະສຶກສາແຕ່ເມືອງທ່າແຂກ ຫາ ຊາຍແດນລາວ-ຫວຽດນາມກ່ອນ, ຫຼັງຈາກໄດ້ຮັບອະນຸຍາດຈາກລັດຖະບານ ສສ ຫວຽດນາມແລ້ວ ຈຶ່ງຈະສືບຕໍ່ສຶກສາຈາກຊາຍແດນລາວ-ຫວຽດນາມ ໄປຫາທ່າເຮືອວຸ້ງອາງ ເຊິ່ງຢູ່ເບື້ອງລາວປະມານ 150 ກິໂລແມັດ ແລະ ຢູ່ເບື້ອງ ສສ ຫວຽດນາມ ປະມານ 120 ກິໂລແມັດ. ເຊິ່ງໂອກາດຕໍ່ໄປ ຫາກໄດ້ຮັບອະນຸຍາດຈາກລັດຖະບານລາວ ແລະ ລັດຖະບານ ສສ ຫວຽດນາມຢ່າງເປັນທາງການ ພວກເຮົາສາມາດກໍ່ສ້າງເສັ້ນທາງລົດໄຟນີ້ໄດ້ໃນທ້າຍປີ 2021 ຄາດວ່າໃຊ້ເວລາ 3 ປີໃຫ້ສຳເລັດການກໍ່ສ້າງກໍ່ຄືໃນປີ 2024. ໃນສ່ວນຂອງຂະໜາດລົດໄຟ ແມ່ນເປັນປະເພດລົດໄຟທາງດ່ຽວຕາມມາດຕະຖານສາກົນເພື່ອຮອງຮັບການຂົນສົ່ງ ແລະ ໂດຍສານ ເຊິ່ງຄວາມໄວ ປະມານ 90 ຫາ 120 ກິໂລແມັດຕໍ່ຊົ່ວໂມງ ເຊິ່ງນຳໃຊ້ອຸປະກອນ ແລະ ເຕັກໂນໂລຊີຈາກປະເທດອິນໂດເນເຊຍ. ຂະນະທີ່ ການລົງທຶນແມ່ນໃນຮູບແບບ BOT ຫຼື PPP ທັງນີ້ກໍ່ຂຶ້ນກັບການອອກແບບ-ສຳຫຼວດໃຫ້ແລ້ວກ່ອນ ຈຶ່ງສາມາດໃຫ້ລາຍລະອຽດວ່າຈະລົງທຶນໃນຮູບແບບໃດ. ສຳລັບມູນຄ່າການລົງທຶນ ພາຍຫຼັງສຳເລັດການສຳຫຼວດ-ອອກແບບລະອຽດແລ້ວ ທາງບໍລິສັດຈະຖະແຫຼງຂ່າວໃຫ້ຊາບອີກຄັ້ງ.

ໃນວັນທີ 20 ກັນຍາ 2019 ທີ່ຜ່ານມາ ທີ່ບາງກອກ ປະເທດໄທ, ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຮັບລາງວັນ Asia's Best Performing Companies 2019 ຈາກສະຖາບັນ Asia Corporate Excellent & Sustainability Awards ອັນສືບເນື່ອງມາຈາກຕະຫຼອດໄລຍະ 10 ກວ່າປີທີ່ຜ່ານມາທີ່ ປີໂຕຣເທຣດ ໄດ້ເປັນສ່ວນໜຶ່ງຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມ ຢ່າງຕັ້ງໜ້າຈົນໄດ້ຮັບຄວາມນິຍົມ ແລະ ໄວ້ໃຈໃນການບໍລິການບໍ່ວ່າຈະເປັນລູກຄ້ານ້ຳມັນ ພລັສ ທົ່ວປະເທດ ແລະ ບັນດາລູກຄ້າໂຄງການກໍ່ສ້າງ, ເໝືອງແຮ່, ອຸດສາຫະກຳ ແລະ ການຂົນສົ່ງຕ່າງໆ ທີ່ໄດ້ນຳໃຊ້ຜະລິດຕະພັນ ແລະ ການບໍລິການຂອງ ປີໂຕຣເທຣດ ດ້ວຍຄວາມໄວ້ວາງໃຈສະເໝີມາ.







ການຂາຍ

- ຍອດຂາຍລວມຂອງນ້ຳມັນເຊື້ອໄຟປະຈຳປີ 2019 ສາມາດປະຕິບັດໄດ້: 84,28% ຂອງແຜນປີ.

ລ/ດ	ປະເພດນ້ຳ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	ພລາຕິນຳ PLT	14.518.000	15.159.200	(641.200)
2	ໂກລ GLD	24.036.000	24.730.200	(694.200)
3	ມາດຕະຖານ STD	17.747.000	27.543.220	(9.796.220)
4	ທ້ອງຖິ່ນພັດທະນາ THN	10.675.000	12.095.960	(1.420.960)
ລວມ		66.976.000	79.528.580	(12.552.580)



ລ/ດ	ລູກຄ້າໂຄງການ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	Other-B2B	8.867.000	12.270.000	(3.403.000)
2	Phubia mining	48.480.000	50.385.000	(1.905.000)
3	SINOHYDRO	9.669.000	12.373.000	(2.704.000)
4	Yunnan	35.341.000	46.228.000	(10.887.000)
ລວມ		102.357.000	121.256.000	(18.899.000)



ລ/ດ	ສິນຄ້າ	ຍອດຂາຍ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)
1	ນ້ຳມັນເຄື່ອງ	10.335	155.000	(144.665)

ຍອດຂາຍລວມ 2019 (ລິດ)	ແຜນປີ 2019 (ລິດ)	ສ່ວນຕ່າງ (ລິດ)	ຄິດເປັນ
169.343.335	200.939.580	(31.596.245)	**84,28%**

ສາງນ້ຳມັນ

ການບໍລິຫານສາງນ້ຳມັນ

- ຮັບເຂົ້າສາງທັ້ງໝົດ 169,849,456 ລິດ
- ຈ່າຍອອກສາງທັ້ງໝົດ 168,635,877 ລິດ
- ຄ່າສະເລ່ຍອາຍລະເຫີຍຂອງນ້ຳມັນແອດຊັງ 95 ໃນລະຫວ່າງເກັບຮັກສາເທົ່າກັບ -100 ລິດຂອງຍອດຮັບ ທັງໝົດ 918,092 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.01 ສ່ວນຮ້ອຍ
- ຄ່າສະເລ່ຍອາຍລະເຫີຍຂອງນ້ຳມັນແອດຊັງ 91 ໃນລະຫວ່າງເກັບຮັກສາເທົ່າກັບ -25,860 ລິດ ຂອງ ຍອດຮັບທັງໝົດ 25,963,159 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.10 ສ່ວນຮ້ອຍ;
- ຄ່າສະເລ່ຍອາຍລະເຫີຍຂອງນ້ຳມັນກາຊວນໃນລະຫວ່າງເກັບຮັກສາເທົ່າກັບ -39,642 ລິດ ຂອງຍອດຮັບ ທັງໝົດ 141,689,024 ລິດ ຢູ່ໃນເກນມາດຕະຖານໃນອັດຕາສະເລ່ຍ -0.04 ສ່ວນຮ້ອຍ;
- ຮັບ-ຈ່າຍ ນ້ຳມັນເຄື່ອງທັງໝົດ 10,458 ລິດ

ວຽກງານດ້ານບຸກຄະລາກອນ

ການດຳເນີນງານດ້ານບຸກຄະລາກອນໃນປີ 2019 ຜ່ານມາແມ່ນເນັ້ນໃນການເປັນຄູ່ຮ່ວມທາງຍຸດທະສາດຂອງອົງກອນ ໃນການສັນຫາບຸກຄະລາກອນທີ່ເໝາະສົມເຂົ້າຕຳແໜ່ງທີ່ຫວ່າງຢ່າງມີປະສິດທິພາບ, ເບິ່ງແຍງສະຫວັດດີການຂອງພະນັກງານຕາມກົດລະບຽບພາຍໃນບໍລິສັດ ແລະ ຕາມກົດໝາຍແຮງງານວາງອອກ.

ນອກນີ້ກໍ່ຍັງໄດ້ຈັດໃຫ້ມີການຝຶກອົບຮົມໃນຫົວຂໍ້ຕ່າງໆ ເພື່ອເພີ່ມທັກສະ ແລະ ຄວາມຮັບຮູ້ຂອງພະນັກງານພາຍໃນອົງກອນດັ່ງນີ້:

- ການເຜີຍແຜ່ນະໂຍບາຍບໍລິສັດ, ມາດຕະຖານ ISO ແລະ ກົດໝາຍປະຈຳສົກປີ 2018;
- ເຜີຍແຜ່ກົດລະບຽບ ແລະ ນະໂຍບາຍບໍລິສັດ (ສຳລັບພະນັກງານເຂົ້າໃໝ່);
- ເຜີຍແຜ່ລະບຽບຄວາມປອດໄພ ແລະ ສິ່ງແວດລ້ອມ (ສຳລັບພະນັກງານເຂົ້າໃໝ່);
- ຝຶກອົບຮົມການປະເມີນຜົນຜ່ານລະບົບອອນໄລນ໌;
- ການຂຽນໃບອະນຸຍາດກ່ອນການເຮັດວຽກ (Work permits writing training);
- ການຝຶກອົບຮົມການນຳໃຊ້ພະລັງງານໄຟຟ້າຢ່າງປະຢັດ;
- ຝຶກອົບຮົມນັກຊ່ຽວຊານບັນຊີລາວ (Lao CPAs) 1 ປີເຄິ່ງ;
- ຝຶກອົບຮົມໂປຼແກຼມບັນຊີ AX;
- ໂຄງການຝຶກອົບຮົມເລື່ອງຄວາມປອດໄພໃນການຂັບຂີ່ພາຫະນະ;

ຈຳນວນພະນັກງານປທລ ປະຈຳປີ 2019

ຫ້ອງການ/ສາຂາ	ຍິງ	ຊາຍ	ລວມ
ສຳນັກງານໃຫ່ຍ ນະຄອນຫຼວງວຽງຈັນ	21	32	53

ນອກນີ້ໃນບໍລິສັດຍັງໄດ້ຮັບເອົານັກສຶກສາຈາກສະຖາບັນການສຶກສາຕ່າງໆ ເຂົ້າມາຝຶກງານໃນຝ່າຍຕ່າງໆຂອງ ບໍລິສັດມີດັ່ງລຸ່ມນີ້:

ລ/ດ	ລາຍລະອຽດ	ໄລຍະເດືອນ	ຈຳນວນຄົນ	ສະຖານທີ
1	ນັກສຶກສາຝຶກງານ ວິທະຍາໄລດົງຄຳຊ້າງ (ສາຂາບັນຊີ-ການເງິນ)	3	5	ສຳນັກງານໃຫຍ່
2	ນັກສຶກສາຝຶກງານ ວິທະຍາໄລດົງຄຳຊ້າງ (ສາຂາບັນຊີ-ການເງິນ)	2	1	ສຳນັກງານໃຫຍ່
3	ນັກສຶກສາຝຶກງານ ມະຫາວິທະຍາໄລຂອນແກ່ນ, ປະເທດໄທ (ສາຂາວິສະວະກຳໂຍທາ)	3	2	ສຳນັກງານໃຫຍ່
4	ນັກສຶກສາຝຶກງານ ວິທະຍາໄລກະສິກຳ ດົງຄຳຊ້າງ	4	4	ສຳນັກງານໃຫຍ່
5	ນັກສຶກສາຝຶກງານ ວິທະຍາໄລ ລາວນານາຊາດ	2	1	ສຳນັກງານໃຫຍ່
6	ນັກສຶກສາຝຶກງານ ມະຫາວິທະຍາໄລພຣະຈອມກ້າວໄທແລນ, ປະເທດໄທ	4	1	ສຳນັກງານໃຫຍ່
7	ນັກສຶກສາຝຶກງານ ມະຫາວິທະຍາໄລ ໂຮ່ຈິມິນ, ປະເທດຫວຽດນາມ	4	1	ສຳນັກງານໃຫຍ່
8	ນັກສຶກສາຝຶກງານ ມະຫາວິທະຍາໄລສ້າງຄູຢຸນນານ	2	1	ສຳນັກງານໃຫຍ່
ລວມ			16	

ວຽກງານດ້ານການຊ່ວຍເຫຼືອສັງຄົມ

ໄປພ້ອມກັບການດຳເນີນທຸລະກິດ ບໍລິສັດຍັງໄດ້ຮ່ວມຊ່ວຍເຫຼືອສັງຄົມໃນດ້ານຕ່າງໆ ຕາມສະພາບຄວາມເປັນຈິງແຕ່ລະໄລຍະ ກິດຈະກຳທີ່ພົ້ນເດັ່ນກໍ່ແມ່ນ ພິທີມອບຮັບ ແລະ ເປີດການນຳໃຊ້ ຂົວຂ້າມນ້ຳບາກ ລະຫວ່າງບ້ານຝ້າ ແລະ ບ້ານໂຄ້ງ ເມືອງນ້ຳບາກ ແຂວງຫຼວງພະບາງ ໄດ້ຈັດຂຶ້ນວັນທີ 9 ກຸມພາ 2019 ທີ່ບໍລິເວນສິ້ນຂົວບ້ານໂຄ້ງ ໂດຍມີ ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ ພ້ອມດ້ວຍການນຳຂອງ ແຂວງຫຼວງພະບາງ, ທ່ານ ຈັນທອນ ສິດທິໄຊ ປະທານບໍລິສັດ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ກຸ່ມບໍລິສັດຟ້ງສະຫວັນ) ຜູ້ຮັບເໝົາກໍ່ສ້າງ, ອົງການປົກຄອງເມືອງ ພ້ອມທັງປະຊາຊົນທັງສອງບ້ານເຂົ້າຮ່ວມ.

ທັງນີ້ໃນເມືອງກ່ອນປະຊາຊົນທັງສອງຝັ່ງນ້ຳບາກ ແມ່ນປະສົບຄວາມລຳບາກໃນການໄປມາຫາສູ່ກັນຕ້ອງໄດ້ຂ້າມນ້ຳທາງເຮືອ ແລະ ຖ້າເປັນຊ່ວງລະດູຝົນນ້ຳນອງແມ່ນບໍ່ສາມາດຂ້າມໄປມາຫາກັນໄດ້. ທາງພັກ-ລັດ ກໍໄດ້ເຫັນເຖິງຄວາມຈຳເປັນຂອງພີ່ນ້ອງປະຊາຊົນ ຈຶ່ງໄດ້ລິເລີ່ມໃຫ້ມີໂຄງການເຮັດຂົວຂ້າມເຊື່ອມຕໍ່ສອງບ້ານນີ້ເຂົ້າຫາກັນ ກໍ່ເພື່ອແນໃສ່ການອຳນວຍຄວາມສະດວກແກ່ການສັນຈອນລະຫວ່າງ ບ້ານຝ້າ ແລະ ບ້ານໂຄ້ງ ເມືອງນ້ຳບາກ ແຂວງຫຼວງພະບາງ ກໍ່ຄື ຜູ້ທີ່ສັນຈອນຜ່ານເສັ້ນທາງນີ້ ກໍ່ຄືປະຊາຊົນເມືອງນ້ຳບາກ ສະດວກສະບາຍຍິ່ງຂຶ້ນ ສ້າງເງື່ອນໄຂໃຫ້ແກ່ການພັດທະນາເສດຖະກິດ ແລະ ສັງຄົມຂອງໝູ່ບ້ານໃນອະນາຄົດ.

ຂົວຂ້າມນ້ຳບາກແຫ່ງນີ້ ເລີ່ມທຳການກໍ່ສ້າງແຕ່ເດືອນເມສາ 2018 ທີ່ຜ່ານມາ ສອງສິ້ນຕັ້ງດ້ວຍເສົາເຫຼັກ, ມີສາຍກາບເຫຼັກຂະໜາດໃຫຍ່ຈ່ອງດຶ້ງ, ໂຕຂົວເປັນໂຄງເຫຼັກ ກວ້າງ 2 ແມັດ ແລະ ມີຄວາມຍາວ 125 ແມັດ ໂດຍສາມາດຮອງຮັບລົດຈັກ, ລົດຖີບ ແລະ ຜູ້ຄົນຍ່າງຜ່ານໄປມາໄດ້. ໂດຍງົບປະມານການກໍ່ສ້າງທັງໝົດເປັນມູນຄ່າ 1 ຕື້ 800ລ້ານ ກີບ ເຊິ່ງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ເປັນຜູ້ສະໜອງທຶນທັງໝົດ.









ການຊ່ວຍເຫຼືອສັງຄົມໃນ ໂຄງການປູກປ່າຂອງ ປທລ ໃນປີ 2019 ເຊິ່ງເປັນປີທີ 8 ແລ້ວທີ່ໂຄງການໄດ້ສືບຕໍ່ໃນແຕ່ລະປີ. ປີນີ້ໄດ້ປູກເບ້ຍໄມ້ມີຄ່າເຊັ່ນ: ໄມ້ດູ່, ໄມ້ແຕ້ຄ່າ ແລະ ໄມ້ສັກ ຈຳນວນ 5,000 ກວ່າເບ້ຍ ປຸກໃນພື້ນທີ່ປ່າຟື້ນຟູສະຫງວນໃນເນື້ອທີ 5 ເຮັກຕາ ເຂດຕີນພູເຂົາຄວາຍ ຂອງບ້ານນາຄົນທຸງ ເມືອງໄຊທານີ ນະຄອນຫຼວງວຽງຈັນ ມູນຄ່າທັງໝົດ 20,800,000 ກີບ ໂດຍການປະສານສົມທົບຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກຳ, ສຳນັກງານນາຍົກ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ຂອງເມືອງ ພ້ອມທັງປະຊາຊົນ ແລະ ນ້ອງນ້ອຍເຍົາວະຊົນເຂົ້າຮ່ວມຢ່າງເປັນຂະບວນພົດພື້ນ.







ສະຫຼຸບການຊ່ວຍເຫຼືອສັງຄົມຂອງ ປທລ ປະຈຳປີ 2019

ລ/ດ	ພາກສ່ວນທີ່ຊ່ວຍເຫຼືອ	ຈຳນວນເງິນ
1	ສະພາການຄ້າ, ສະໜັບສະໜຸນງານກິລາສາມັກຄີ	10,000,000 ກີບ
2	ໂຄງການສ້າງຂົວຂ້າມນ້ຳບາກ, ບ້ານໂຄ້ງ-ບ້ານຝ້າ ເມືອງນ້ຳບາກ, ແຂວງຫຼວງພະບາງ	1,800,000,000 ກີບ
3	ໂຄງການ 7 ວັນອັນຕະລາຍ 11-14/04/2019, ມູນລະນິທິຮ່ວມໃຈຊ່ວຍເຫຼືອຜູ້ປະສົບໄພ 1630	500,000 ກີບ
4	ປູກປ່າຢູ່ບ້ານ ນາຄົນທຸງ, ກົມປ່າໄມ້ ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ	20,800,000 ກີບ
5	ບໍລິຈາກເຄື່ອງ, ສູນເສຍອົງຄະ ກອງ 790	46,137,000 ກີບ
6	ສະໜັບສະໜຸນງານຂອງສູນເສຍອົງຄະ ກອງ 790	500,000 ກີບ

7	ສະໜັບສະໜຸນໂຄງການສົ່ງເສີມການແຂ່ງຂັນກິລາລີກໃຫ່ຍອ່ອນໂຣດນາໆ ຊາດຊິ້ງຂັນທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ	26,250,000 ກີບ
8	ຊ່ວຍເຫຼືອນ້ຳຖ້ວມຢູ່ພາກໃຕ້ຂອງ ສປປ ລາວ	45,324,000 ກີບ
9	ກົມສົ່ງເສີມການລົງທຶນ (ກະຊວງແຜນການ ແລະ ການລົງທຶນ), ສະໜັບສະໜຸນງານກິລາສາມັກຄີ	4,428,500 ກີບ
ຈຳນວນລວມ		**1,953,939,500 ກີບ**

ສະຫຼຸບການມອບພັນທະອາກອນ ແລະ ອື່ນໆ ເຂົ້າລັດ ປະຈຳປີ 2019

- ພາສີນຳເຂົ້າ 43,299,752,000 ກີບ
- ອກຊ 174,210,011,500 ກີບ
- ອມພ ສິ້ນເຂົ້າ 162,358,934,899 ກີບ
- ອມພ ຕົ້ນທາງ 17,697,770,616 ກີບ
- ບຸລະນະທາງ 88,338,640,000 ກີບ
- ຄ້ຳແຮ 80,734,800,000 ກີບ
- ອິມິດເຕ້ 1,019,292,000 ກີບ
- ຄຸນນະພາບ 2,717,812,000 ກີບ
- ອມພ ຈ່າຍເພີ້ມ 15,826,873,767 ກີບ
- ອກລ 800,000,000 ກີບ
- ອກດ 1,251,753,473 ກີບ


ລວມ: **588,255,640,255 ກີບ**

**** ບົດລາຍງານທາງດ້ານບັນຊີ ແລະ ການເງິນ (ແຍກຕ່າງຫາກ)***

ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

ພາຍຫຼັງທີ່ ປທລ ໄດ້ສ້າງຕັ້ງ 2 ບໍລິສັດລູກ (ນຳເຂົ້າ/ສົ່ງອອກ ແລະ ຈັດຈຳໜ່າຍ) ການດຳເນີນການສ່ວນຫຼາຍບໍ່ໄດ້ເປັນຂອງ ປທລ. ເພື່ອເປັນການລວມສູນພາຍໃຕ້ ປທລ ຈຶ່ງສ້າງ Shared Service Centers (SSC). ເຊິ່ງວັດຖຸປະສົງ ແລະ ປະໂຫຍດຂອງສູນຄື:

- ເພື່ອຄວາມຄ່ອງຕົວ ແລະ ລວມສູນ;
- ເພື່ອສ້າງລາຍໄດ້ເພີ່ມໃຫ້ ປທລ;
- ເພື່ອໃຫ້ມີການຄວບຄຸມທີ່ດີຂຶ້ນ ແລະ ມີຄວາມໂປ່ງໃສກ່ຽວກັບຄ່າໃຊ້ຈ່າຍຂອງບໍລິສັດໃນເຄືອທັງໝົດ;
- ເພື່ອໃຫ້ບໍລິການເປັນມາດຕະຖານດຽວກັນ ແລະ ເປັນມືອາຊີບໃຫ້ກັບບໍລິສັດໃນເຄືອທັງໝົດ.



ຄາດຄະເນລາຍໄດ້ທັງໝົດຈາກ SSC: 471.000 ໂດລາສະຫະລັດ (ຫຼື 4.000 ລ້ານກີບ).

- ບໍລິຫານຫ້ອງການ ຄ່າເຊົ່າຕຶກ: 300.000 ໂດລາສະຫະລັດ;
- ລາຍຮັບຈາກການໃຫ້ບໍລິການໄອທີ ຜ່ານການດຳເນີນງານຂອງກຸ່ມ ປທລ: 110.000 ໂດລາສະຫະລັດ;
- ກິດໝາຍ: 40.000 ໂດລາສະຫະລັດ;
- ການຈັດຊື້: 21.000 ໂດລາສະຫະລັດ.